


ຖະໜົນເລກທີ 9, ບ້ານໂພນສະຫວ່າງໃຕ້, ເມືອງໄກສອນພົມວິຫານ ແຂວງສະຫວັນນະເຂດ. ໂທ: 041 260305, ແຟັກ: 041 260305-6

# ມອບ-ຮັບ ເງິນອຸປະຖຳ ໃຫ້ຫ້ອງວ່າການປົກຄອງເມືອງໜອງບົກ ແຂວງຄຳມ່ວນ










ໂດຍໄດ້ຮັບການມອບໝາຍຈາກ ທະນາຄານແຫ່ງ ສປປ ລາວ ສຳນັກງານໃຫຍ່ ໃຫ້ສາຂາທະນາຄານແຫ່ງ ສປປ ລາວພາກກາງແຂວງສະຫວັນນະເຂດ ເປັນຕົວແທນໄປມອບເງິນອຸປະຖຳໃຫ້ແກ່ຫ້ອງວ່າການປົກຄອງເມືອງໜອງບົກ ເພື່ອນຳໄປສ້າງປະຕູໂຂງເຂົ້າເມືອງໜອງບົກ ແຂວງຄຳມ່ວນ. ສະນັ້ນ, **ໃນຕອນບ່າຍວັນທີ 28 ກຸມພາ 2018 ເວລາ 15:00 ໂມງທີ່ຜ່ານມາ**, ສາຂາ ທຫລ.ສຂ ໄດ້ເດີນທາງໄປມອບເງິນອຸປະຖຳດັ່ງກ່າວ ແລະ ທາງຫ້ອງວ່າການປົກຄອງເມືອງໆໜອງບົກ ໄດ້ຈັດພິທີ ມອບ-ຮັບ ເງິນອຸປະຖຳ ຈຳນວນ **30.000.000 ກີບ.** ຊຶ່ງຕາງໜ້າມອບໂດຍ **ທ່ານ ເສດຖາ ກັນຍາວັນ** ຮອງຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກກາງແຂວງສະຫວັນນະເຂດ ແລະ ຕາງໜ້າຮັບໂດຍ **ທ່ານ ສິນທະສອນ ມະຫາໂຄດ ເລຂາພັກເມືອງ** ເຈົ້າເມືອງໆໜອງບົກ ພ້ອມດ້ວຍຄະນະປະຈຳພັກເມືອງ ແລະ ຫົວໜ້າພະແນກການຕ່າງໆອ້ອມຂ້າງເມືອງ, ຫົວໜ້າໜ່ວຍບໍລິການຂອງທະນາຄານທຸລະກິດ ແລະ ພະນັກງານຈາກ ທຫລ.ສຂ ຈຳນວນໜຶ່ງ ເຂົ້າຮ່ວມເປັນສັກຂີພະຍານ. ຫຼັງຈາກນັ້ນ, ທ່ານເຈົ້າເມືອງໆເມືອງໜອງບົກ ຕາງໜ້າຊາວເມືອງໜອງບົກ ກໍ່ໄດ້ມອບໃບກຽດຕິຄຸນໃຫ້ ທະນາຄານແຫ່ງ ສປປ ລາວ ເພື່ອສະແດງຄວາມຮູ້ບຸນຄຸນ ແລະ ຂອບອົກຂອບໃຈມາຍັງການນຳຂອງ ທະນາຄານແຫ່ງ ສປປ ລາວ ທີ່ໄດ້ໃຫ້ການອຸປະຖຳອຸ້ມຊູ ຊ່ວຍເຫຼືອໃນວຽກງານດັ່ງກ່າວ ແລະ ຈະຈົດຈຳ ແລະ ຈາລຶກໄວ້ໃນໝາກກະດອງໃຈຂອງຊາວເມືອງໜອງບົກຕະຫຼອດໄປ.

ພາບໂດຍ : ວັນນະສິນ ຄຸນມະນີຈັນ

ຂ່າວໂດຍ: ສຸກສາຄອນ ບັນດາວົງ

ບັນນາທິການໂດຍ: ທ ໄຊຍະສັກ

**ຈົ່ງຕິດ, ເອີ້ນ, ຊຳລະຄ່າບໍລິການ ແລະ ສິນຄ້າເປັນເງິນກີບ**